ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

________000________

ທະນາຄານແຫ່ງ ສປປ ລາວ

ກົມຈັດຕັ້ງແລະພະນັກງານ

ເລກທີ 151 /ກຈພ

ນະຄອນຫລວງວຽງຈັນ, ວັນທີ 23 JUL 2015

ສຳນັກງານ ຄຄຊ
ຮັບ ເລກທີ 751
ວັນທີ 24 JUL 2015
ໂທລະສັບ 021 217770

## ແຈ້ງການ

**ເຖິງ:** ບັນດາທ່ານ ຫົວໜ້າກົມ ແລະ ທຽບເທົ່າພາຍໃນ ທຫລ ທີ່ນັບຖື.

**ເລື່ອງ:** ການເຂົ້າຮ່ວມຝຶກອົບຮົມຫົວຂໍ້ຕ່າງໆ ຢູ່ສະຖາບັນການທະນາຄານ.

- ອີງຕາມໃບສະເໜີຂອງສະຖາບັນການທະນາຄານ ສະບັບເລກທີ 1801/ສທຄ ລົງວັນທີ 17/7/2015.

ກົມຈັດຕັ້ງແລະພະນັກງານ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ: ສະຖາບັນການທະນາຄານ ຈະຈັດຝຶກອົບຮົມໄລຍະສັ້ນ, ຢູ່ສະຖາບັນການທະນາຄານ, ປະກອບມີ 3 ຫົວຂໍ້, ເລີ່ມເວລາ 8:30-16:30 ໂມງ, ລາຍລະອຽດມີດັ່ງລຸ່ມນີ້:

1. **ເຕັກນິກການບໍລິຫານ:** ແຕ່ວັນທີ 03-05/8/2015, ຄ່າສະໝັກ 500.000 ກີບ/ຄົນ; ນັກວິທະຍາກອນແມ່ນ ທ່ານ ສີງທະວອນ ດາລາວົງ ຫົວໜ້າສະຖາບັນຄົ້ນຄວ້າວິທະຍາສາດການປົກຄອງ ແລະ ຝຶກອົບຮົມ, ກະຊວງພາຍໃນ;

2. **ພື້ນຖານການທະນາຄານ:** ແຕ່ວັນທີ 10-21/8/2015, ຄ່າສະໝັກ: 1.000.000 ກີບ/ຄົນ; ນັກວິທະຍາກອນແມ່ນ ຄະນະສະຖາບັນການທະນາຄານ ແລະ ຄູອາຈານຂອງ ສທຄ;

3. **ການວິເຄາະລາຍງານທາງການເງິນ:** ແຕ່ວັນທີ 24-28/8/2015, ຄ່າສະໝັກ 600.000 ກີບ/ຄົນ; ນັກວິທະຍາກອນແມ່ນ ຄະນະຄູອາຈານພາກວິຊາການເງິນ, ສະຖາບັນການທະນາຄານ.

ສະນັ້ນ, ກົມຈັດຕັ້ງແລະພະນັກງານ ຈຶ່ງແຈ້ງມາຍັງທ່ານ ເພື່ອແຈ້ງໃຫ້ພະນັກງານ ທີ່ມີຄວາມສົນໃຈສະໝັກເຂົ້າຮ່ວມການຝຶກອົບຮົມດັ່ງກ່າວ ດ້ວຍທຶນຕົນເອງທັງໝົດ.

ກະລຸນາແຈ້ງລາຍຊື່ເປົ້າໝາຍທີ່ສົນໃຈຈະເຂົ້າຮ່ວມ ສົ່ງໄປຍັງສະຖາບັນການທະນາຄານໂດຍກົງ **ກ່ອນວັນທີ 29/7/2015.**

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ຕາມເນື້ອໃນຈິດໃຈດັ່ງກ່າວດ້ວຍ.

**ຫົວໜ້າກົມຈັດຕັ້ງແລະພະນັກງານ**

ທະນາຄານແຫ່ງ ສ. ປ. ປ. ລາວ
ກົມຈັດຕັ້ງແລະພະນັກງານ

ບຸນຕາ ດາຣາວົງ